ວາລະສານການສຶກສາຄູລາວແບບຍືນຍົງ ວິທະຍາໄລຄູສາລະວັນ ປີທີ 2 ສະບັບທີ 3 (ເດືອນ ມີຖຸນາ, 2026) ໜ້າ 123 – 131
Lao Journal of Sustainable Teacher Education SALAVAN Teacher Training College, Volume 2 No 3 (June, 2026) Page 123 – 131

ISSN (Print): 0056-3080
ISSN (Online): 3107-2992

ວາລະສານການສຶກສາຄູລາວແບບຍືນຍົງ
ວິທະຍາໄລຄູສາລະວັນ
https://www.sttcjournal.edu.la
ດຳເນີນການວາລະສານໂດຍ ວິທະຍາໄລຄູສາລະວັນ

---

# ສະພາບການໃຊ້ສື່ເຂົ້າໃນການຮຽນ-ການສອນ ວິຊາວິທະຍາສາດການເມືອງສາຍຄູພາສາລາວ-ວັນນະຄະດີ ປີທີ 3 ວິທະຍາໄລຄູສົງຈຳປາສັກ 2024-2025

# The Situation of Using Instructional Media in Teaching and Learning Political Science for Third-Year Lao Language and Literature Teacher Training Students at Champasak Teacher Training College, Academic Year 2024–2025

ສຸກສາຄອນ ສິງສົມບັດ[1]
Souksakhone singsombath[1]


## ບົດຄັດຫຍໍ້

ຈາກບັນດາຄວາມຮຽກຮ້ອງຕ້ອງການ ໃນການນຳໃຊ້ສື່ເຂົ້າໃນການຮຽນ-ການສອນ ໃນສະຖາບັນການສຶກສາປັດຈຸບັນແມ່ນມີຄວາມຄວາມສຳຄັນ ແລະ ມີຄວາມຈຳເປັນຫຼາຍ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງການສຶກສາໃນຍຸກສະໄໝໃໝ່ ແລະ ເພື່ອຍົກສູງຄຸນນະພາບການສຶກສາ.

ໃນການສຶກສາວິໄຈຄັ້ງນີ້ ສະພາບການນຳໃຊ້ສື່ເຂົ້າໃນການຮຽນ-ການສອນວິຊາວິທະຍາສາດການເມືອງສາຍຄູພາສາລາວ-ວັນນະຄະດີ ປີທີ 3 ວິທະຍາໄລຄູສົງຈຳປາສັກ ສົກສຶກສາ 2024-2025 ໂດຍໃຊ້ 2 ດ້ານ ຄື: ດ້ານການນຳໃຊ້ສື່ເຂົ້າໃນການຮຽນ - ການສອນ ແລະ ດ້ານຜົນການນຳໃຊ້ສື່ເຂົ້າໃນການຮຽນ - ການສອນ. ກຸ່ມຕົວຢ່າງທີ່ໃຊ້ເຂົ້າໃນການວິໄຈໄດ້ແກ່ : ຄະນະອຳນວຍການ 01 ທ່ານ, ຄູສອນ 01 ທ່ານ ແລະ ນັກສຶກສາ ຈຳນວນ 8 ອົງ ກຸ່ມຕົວຢ່າງ ທັງໝົດ 10 ອົງ/ທ່ານ, ເຄື່ອງມືທີ່ໃຊ້ໃນການແມ່ນໄດ້ນຳໃຊ້ຮ່າງສອບຖາມມາດຕະຖານ 5 ລະດັບ, ຄຳຖາມທັງໝົດ ມີຈຳນວນ 25 ຂໍ້, ການວິເຄາະຂໍ້ມູນແມ່ນໄດ້ໃຊ້ຕາຕະລາງສະຖິຕິເປັນພື້ນຖານໃນການວິເຄາະ ເພື່ອຊອກຫາເປີເຊັນ ແລະ ຄ່າສະເລ່ຍ.

**ຜົນການວິໄຈຄັ້ງນີ້ພົບວ່າ:**

1. ດ້ານການນຳໃຊ້ສື່ເຂົ້າໃນ ການຮຽນ-ການສອນຂອງຄູ, ຄວາມຄິດເຫັນໂດຍລວມແມ່ນຢູ່ໃນລະດັບປານກາງ ($\bar{X}$=3.12), ໝາຍຄວາມວ່າສື່ການສອນທີ່ຄູນຳມາໃຊ້ກະຕຸ້ນໃຫ້ນັກສຶກສາເກີດການຮຽນຮູ້ດ້ວຍຕົນເອງ,

---

[1] ພະແນກບໍລິຫານ-ການເງິນ ວິທະຍາໄລຄູສົງຈຳປາສັກ/ສປປ ລາວ
Corresponding Author: Souksakhone singsonbath, Email: souksakhone300884@gmail.com, Tel: +8562099781776

ນຳໃຊ້ສື່ການສອນເໝາະສົມກັບລະດັບຄວາມຮູ້ຂອງນັກສຶກສາ, ສື່ການສອນທີ່ໃຊ້ແມ່ນໃຫ້ສອດຄ່ອງກັບເນື້ອໃນບົດຮຽນ,
ຄູໄດ້ໝູນໃຊ້ສິ່ງທີ່ມີໃນທ້ອງຖິ່ນເປັນສື່ໃນການຮຽນ - ການສອນ ເຊິ່ງຄູຈຳເປັນຕ້ອງພັດທະນາວິທີການນຳໃຊ້ສື່ແລະ
ການນຳໃຊ້ສື່ເຂົ້າໃນການສິດສອນໃຫ້ມີຄວາມຫຼາກຫຼາຍ.

2. ດ້ານຜົນການນຳໃຊ້ສື່ເຂົ້າໃນການຮຽນ - ການສອນ, ຄວາມຄິດເຫັນໂດຍລວມແມ່ນຢູ່ໃນລະດັບປານກາງ ($\bar{X}$=3.21), ໝາຍຄວາມວ່າການປະເມີນຜົນການນຳໃຊ້ສື່ເຂົ້າໃນການຮຽນ-ການສອນ, ພາຍຫຼັງການປະເມີນຄູໄດ້ສົ່ງເສີມນັກສຶກສາເກັ່ງ ແລະ ຊອກຫາວິທີຊ່ວຍເຫຼືອນັກສຶກສາອ່ອນ, ການປະເມີນຜົນໃຫ້ສອດຄ່ອງ ແລະ ເໝາະສົມກັບເນື້ອໃນບົດຮຽນ, ມີການປະເມີນຜົນທາງດ້ານການຮຽນປະຈຳເດືອນ ແລະ ຄູໄດ້ມີການແຈ້ງຜົນການປະເມີນທຸກຄັ້ງ ແລະ ຄູຄວນມີການຕິດຕາມ, ສັງເກດ ແລະ ຊຸກຍູ້ນັກສຶກສາໃຫ້ເອົາໃຈໃສ່ເຂົ້າໃນການຮຽນ.

ການນຳໃຊ້ສື່ເຂົ້າໃນການຮຽນ-ການສອນວິຊາວິທະຍາສາດການເມືອງ ສາຍຄູພາສາລາວ-ວັນນະຄະດີ ປີທີ 3 ວິທະຍາໄລຄູສົງຈຳປາສັກ  ໂດຍລວມຢູ່ໃນລະດັບປານກາງ ທັງດ້ານການນຳໃຊ້ສື່ເຂົ້າໃນການຮຽນ-ການສອນ ແລະ ດ້ານການປະເມີນຜົນການນຳໃຊ້ສື່. ສື່ການສອນທີ່ຄູນຳມາໃຊ້ກະຕຸ້ນໃຫ້ນັກສຶກສາເກີດການຮຽນຮູ້ດ້ວຍຕົນເອງ, ນຳໃຊ້ສື່ການສອນເໝາະສົມກັບລະດັບຄວາມຮູ້ຂອງນັກສຶກ ແລະ ສື່ການສອນທີ່ໃຊ້ແມ່ນໃຫ້ສອດຄ່ອງກັບເນື້ອໃນບົດຮຽນ. ແຕ່ການນຳໃຊ້ສື່ເຂົ້າໃນການສອນຂອງຄູຍັງບໍ່ທັນມີຄວາມຫຼາກຫຼາຍ ແລະ ຍັງບໍ່ທັນສາມາດກະຕຸ້ນຊ່ວຍໃຫ້ນັກສຶກສາເກີດຄວາສົນໃຈໃນບົດຮຽນ. ດັ່ງນັ້ນ, ຄູຄວນພັດທະນາການຳໃຊ້ສື່ໃຫ້ມີຄວາມຫຼາກຫຼາຍເພື່ອເພີ່ມຄວາມສົນໃຈ ແລະ ຍົກລະດັບປະສິດທິຜົນໃນການຮຽນ-ການສອນ.

**ຄຳສັບສຳຄັນ:** ສື່ການສອນ, ພາສາລາວ-ວັນນະຄະດີ, ວິທະຍາສາດການເມືອງ, ວິທະຍາໄລຄູສົງ

## Abstract

From the requirements for the use of media in teaching and learning in educational institutions, it is currently very important and necessary to meet the requirements of modern education and to improve the quality of education.

In this research study, the use of media in teaching and learning of political science, Lao language and literature, 3rd year at Champasak Buddhist Teacher Training College, academic year 2024-2025, using 2 aspects: the use of media in teaching and learning and the results of using media in teaching and learning. The sample group used in the research was: 01 director, 01 teacher and 8 students, a total of 10 sample groups. The instrument used was a 5-level standard questionnaire, with a total of 25 questions. The data analysis was based on statistical tables to find percentages and averages.

The results of this study found that:

1. In terms of the use of media in teaching and learning by teachers, the overall opinion is at a moderate level ($\bar{X}$=3.12), meaning that the teaching media used by teachers motivates students to learn on their own, uses teaching media appropriate to the level of knowledge of students, the teaching media used is consistent with the content of the lesson, teachers have used what is available locally as media in teaching and learning, and teachers need to develop methods of using media and using media in teaching to be diverse.

2. In terms of the results of using media in teaching and learning, the overall opinion is at a moderate level ($\bar{X}$=3.21) meaning that the evaluation of the use of media in teaching and learning, after the evaluation, teachers promote good students and find ways to help weak

students, the evaluation is consistent and appropriate to the content of the lesson, there is a monthly learning evaluation and teachers are notified of the results of each evaluation, and teachers should monitor, observe and encourage students to pay attention to learning.

The use of media in teaching and learning political science in the 3rd year of the Lao Language and Literature Champasak Buddhist Teacher Training College, is generally at an average level, both in terms of the use of media in teaching and learning and in terms of the evaluation of the use of media. The teaching media used by teachers motivate students to learn on their own, use teaching media appropriate to the level of knowledge of students, and the teaching media used is consistent with the content of the lesson. However, the use of media in teaching by teachers is not yet diverse and cannot stimulate students' interest in the lesson. Therefore, teachers should develop the use of media to be diverse to increase interest and improve the effectiveness of teaching and learning.

Keywords: Teaching media, Lao Language and Literature, Political Science, Champasak Buddhist Teacher Training College

## ບົດນຳ

ກອງປະຊຸມໃຫຍ່ຄັ້ງທີ X ຜູ້ແທນທົ່ວປະເທດຂອງພັກ (ເດືອນ 1 ປີ 2016). ຄຳຂວັນຂອງກອງປະຊຸມແມ່ນ: ຍົກສູງຄວາມສາມາດນໃນການນຳພາ ແລະ ລັກສະນະນຳໜ້າຂອງພັກ, ເພີ່ມທະວີຄວາມສາມັກຄີທົ່ວປວງຊົນ, ຢຶດໝັ້ນແນວທາງການປ່ຽນແປງໃໝ່ມີຫຼັກການຂອງພັກ, ປົກປັກຮັກສາ ແລະ ພັດທະນາປະເທດຊາດຢ່າງໝັ້ນຄົງຕາມທິດສັງຄົມນິຍົມ. ກອງປະຊຸມໃຫຍ່ໄດ້ຢືນຢັນສືບຕໍ່ກໍ່ສ້າງ ແລະ ເພີ່ມທະວີວຽກງານການເມືອງແນວຄິດ, ສືບຕໍ່ປະຕິບັດ 2 ໜ້າທີ່ຍຸດທະສາດຕາມແນວທາງການປ່ຽນແປງໃໝ່ຮອບດ້ານ ແລະ ມີຫຼັກການຂອງພັກ, ສິ່ງພົ້ນເດັ່ນແມ່ນດຳເນີນການວຽກງານການເມືອງແນວຄິດໃຫ້ແກ່ພະນັກງານ, ສະມາຊິກພັກ, ດຳເນີນການວຽກງານກໍ່ສ້າງພັກ; ຖືສຳຄັນວຽກງານການພັດທະນາຊັບພະຍາກອນມະນຸດແມ່ນບັນຫາຕັດສິນການພັດທະນາປະເທດຊາດໃນໄລຍະໃໝ່ ແນໃສ່ກໍ່ສ້າງສັງຄົມສີວິໄລ ແລະ ສະເໝີພາບ; ກໍ່ສ້າງລັດປະຊາທິປະໄຕ ປະຊາຊົນມີຄວາມສະຫງົບ ແລະ ໝັ້ນຄົງ.

ດ້ວຍບັນດາໜ້າທີ່ເປັນພື້ນຖານຂອງຕົນ, ການສຶກສາມີບົດບາດສຳຄັນໃນທຸກດ້ານຂອງຊີວິດສັງຄົມ ພິເສດແມ່ນຢູ່ໃນໄລຍະປັດຈຸບັນການສຶກສາແມ່ນອົງປະກອບຕັດສິນໂດຍກົງເຖິງການພັດທະນາຂອງສັງຄົມ. ດັ່ງນັ້ນ, ເມື່ອເວົ້າເຖິງການສຶກສາພັກຂອງພວກເຮົາຢືນຢັນ: “ການສຶກສາແມ່ນນະໂຍບາຍແຫ່ງຊາດ”. ເພື່ອເຮັດໃຫ້ການສຶກສາສາມາດເຮັດສຳເລັດໜ້າທີ່ພື້ນຖານຂອງຕົນ ບັນຫາການປ່ຽນແປງໃໝ່ການສຶກສາຂອງປະເທດ ສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ ໄດ້ຖືກຍົກຂຶ້ນມາເປັນບັນຫາທີ່ມີຄວາມຮີບດ່ວນ ແລະ ຈຳເປັນ. ໃນບັນດາທ່າອ່ຽງການປ່ຽນແປງໃໝ່ໃນປັດຈຸບັນຂົງເຂດການສຶກສາປະເທດເຮົາມີ 2 ທ່າອ່ຽງທີ່ກຳລັງໄດ້ຮັບຄວາມສົນໃຈຫຼາຍນັ້ນແມ່ນ ປ່ຽນແປງໃໝ່ຮອບດ້ານທາງດ້ານເປົ້າໝາຍ, ເນື້ອໃນ, ວິທີສິດສອນ ເຮັດໃຫ້ຜະລິດຕະພັນຂອງການສຶກສານັບມື້ນັບຕອບສະໜອງໄດ້ດີກວ່າເກົ່າຄວາມຮຽກຮ້ອງຕ້ອງການຂອງສັງຄົມ ແລະ ເພີ່ມທະວີການຮ່ວມມືສາກົນໃນຂົງເຂດການສຶກສາ ແລະ ກິລາ.

ໃນຊຸມປີທີ່ຜ່ານມາ, ພ້ອມກັບບັນດາຜົນສຳເລັດລວມ ໃນພາລະກິດພັດທະນາການສຶກສາ ແລະ ກິລາ, ການນຳໃຊ້ສື່ເຂົ້າໃນການຮຽນ-ການສອນ ໄດ້ມີການຂະຫຍາຍຕົວ ແລະ ມີໝາກຜົນຜົນງານໃນລະດັບທີ່ໜ້າ

ພາກພູມໃຈ. ໜຶ່ງໃນຈຳນວນບັນດາສາເຫດທີ່ພາໃຫ້ມີໝາກຜົນ ຜົນງານດັ່ງກ່າວນັ້ນ ແມ່ນວຽກງານການນຳໃຊ້ສື່ໄດ້ຮັບການເອົາໃຈໃສ່. ແຕ່ເຖິງຢ່າງໃດກໍຕາມ, ຕໍ່ໜ້າສະພາບການຂອງຄວາມຮຽກຮ້ອງຕ້ອງການໃໝ່ທີ່ເກີດຂຶ້ນສຳລັບບັນດາວິທະຍາໄລສ້າງຄູກ່ຽວກັບການຍົກສູງຄຸນນະພາບຂອງການກໍ່ສ້າງ, ພັດທະນາບັນດາວິທະຍາໄລໃຫ້ການເປັນສູນກາງແຫ່ງການພັດທະນາ ແລະ ສູນແຫ່ງຄວາມເປັນເລີດ(COE,COD) ໃນສະພາບການທີ່ການນຳໃຊ້ສື່ໃນປັດຈຸບັນທຽບໃສ່ກັບຄວາມຮຽກຮ້ອງຕ້ອງການໃນການສິດສອນຂອງບັນດາວິທະຍາໄລສ້າງຄູຍັງມີຫຼາຍບັນຫາທີ່ພົບພໍ້: ຍັງບໍ່ພຽງພໍທາງດ້ານປະລິມານ, ຄຸນນະພາບຍັງຈຳກັດ, ຄວາມສາມາດໃນການນຳໃຊ້ສື່ຕ່າງໆຂອງຄູຍັງຈຳກັດ ໜຶ່ງໃນສາເຫດຂອງສະພາບການຂ້າງເທິງແມ່ນວຽກງານການຊອກຫາແຫຼ່ງທຶນ, ສະໜອງ, ຈັດຊື້, ຝຶກອົບຮົມການນຳໃຊ້ຂອງບັນດາວິທະຍາໄລສ້າງຄູຍັງຈຳກັດ ແລະ ຍັງບໍ່ທັນໄດ້ເອົາໃຈໃສ່ເຖິງຖອງ.

ໃນປີຜ່ານໆມາ, ການນຳໃຊ້ສື່ເຂົ້າໃນການຮຽນ-ການສອນ ຂອງວິທະຍາໄລຄູສິງຈຳປາສັກໄດ້ມີບາດກ້າວຂະຫຍາຍຕົວພໍສົມຄວນ ແຕ່ຍັງບໍ່ທັນສາມາດຕອບສະໜອງໄດ້ຄວາມຮຽກຮ້ອງຕ້ອງການໃນປັດຈຸບັນ. ການສະໜອງ, ການຈັດຫາ, ຈັດຊື້ບັນດາອຸປະກອນເອເລັກໂຕນິກຍັງບໍ່ທັນພຽງພໍທາງດ້ານປະລິມານ, ຄຸນນະພາບຍັງຕ່ຳ, ຍັງບໍ່ທັນສາມາດຕອບສະໜອງໄດ້ກັບຄວາມຮຽກຮ້ອງຂອງການປ່ຽນແປງໃໝ່; ວຽກງານການຝຶກອົບຮົມ ພິເສດແມ່ນການຝຶກອົບຮົມປະຈຳຕາມແຕ່ລະໄລຍະບໍ່ທັນມີປະສິດທິພາບ, ຮູບແບບການຝຶກອົບຮົມບໍ່ທັນໄດ້ຮັບການປ່ຽນແປງໃໝ່, ວິທີຍັງແບບເກົ່າ, ຍັງບໍ່ທັນແທດເໝາະກັບຕົວຈິງ, ວຽກງານການນຳໃຊ້, ຄຸ້ມຄອງຮັກສາຍັງມີຫຼາຍບັນຫາຕ້ອງໄດ້ຄົ້ນຄວ້າ, ປັບປຸງ ແລະ ແກ້ໄຂ. ເພື່ອແກ້ໄຂສະພາບການຂ້າງເທິງ ຫົວຂໍ້: ສະພາບການນຳໃຊ້ສື່ເຂົ້າໃນການຮຽນ-ການສອນວິຊາວິທະຍາສາດການເມືອງ ສາຍຄູພາສາລາວ-ວັນນະຄະດີ ປີທີ 3 ວິທະຍາໄລຄູສິງຈຳປາສັກ ສົກສຶກສາ 2024-2025 ໄດ້ເລືອກເປັນຫົວຂໍ້ຄົ້ນຄວ້າ, ດ້ວຍຄວາມຄາດຫວັງປະກອບສ່ວນຍົກສູງຄຸນນະພາບການສຶກສາເວົ້າລວມ ແລະ ຄຸນນະພາບສຶກສາວິທະຍາໄລຄູສິງຈຳປາສັກເວົ້າສະເພາະ ຕອບສະໜອງຄວາມຮຽກຮ້ອງຕ້ອງການການປ່ຽນແປງໃໝ່ ແລະ ຍົກສູງຄຸນນະພາບການສຶກສາໃນປັດຈຸບັນ.

## ຈຸດປະສົງຂອງການວິໄຈ

1. ເພື່ອສຶກສາການນຳໃຊ້ສື່ເຂົ້າໃນການຮຽນ-ການສອນ ວິຊາ ວິທະຍາສາດການເມືອງ ທີ່ເນັ້ນການມີນຳໃຊ້ສື່ທີ່ຫຼາກຫຼາຍ ແລະ ໜ້າສົນໃຈ
2. ເພື່ອປະເມີນຜົນໃນການນຳໃຊ້ສື່ຂອງຄູ ແລະ ຂັ້ນຕອນຂອງການປະເມີນຜົນ

## ວິທີດຳເນີນການວິໄຈ

ການວິໄຈຄັ້ງນີ້ໃຊ້ຮູບແບບການວິໄຈແບບສຳຫຼວດ (Survey Research) ເພື່ອສຶກສາສະພາບການນຳໃຊ້ສື່ເຂົ້າໃນການຮຽນ-ການສອນ ໂດຍນຳໃຊ້ວິທີການເກັບກຳຂໍ້ມູນທາງດ້ານປະລິມານ (Quantitative Approach) ເປັນຫຼັກ ເພື່ອອະທິບາຍສະພາບຕົວຈິງທີ່ເກີດຂຶ້ນ.

### ຜູ້ເຂົ້າຮ່ວມການວິໄຈ

ປະຊາກອນ ແລະ ກຸ່ມຕົວຢ່າງທີ່ໃຊ້ໃນການວິໄຈຄັ້ງນີ້ໄດ້ແກ່: ຜູ້ບໍລິຫານ, ຄູສອນ ແລະ ນັກສຶກສາວິທະຍາໄລຄູສິງຈຳປາສັກ ສາຍພາສາລາວ-ວັນນະຄະດີ ປີທີ 3 ສົກສຶກສາ 2024-2025. ເນື່ອງຈາກປະຊາກອນມີຈຳນວນໜ້ອຍ ແລະ ເພື່ອໃຫ້ໄດ້ຂໍ້ມູນທີ່ຄົບຖ້ວນ, ຜູ້ວິໄຈຈຶ່ງໄດ້ເກັບກຳຂໍ້ມູນກັບປະຊາກອນທັງໝົດ ຈຳນວນ 10 ອົງ/ທ່ານ. ເຊິ່ງໃນນັ້ນປະກອບມີ: ຄະນະອຳນວຍການ 01 ທ່ານ, ຄູສອນ 01 ທ່ານ ແລະ ນັກສຶກສາ 8 ອົງ.

ຕາຕະລາງ: 1.1 ສະແດງຈຳນວນປະຊາກອນ ແລະ ກຸ່ມຕົວຢ່າງ.

| ປະຊາກອນ ແລະ ກຸ່ມຕົວຢ່າງ | ປະຊາກອນ | ກຸ່ມຕົວຢ່າງ |
|---|---|---|
| 1. ຄະນະອຳນວຍການ. | 01 | 01 |
| 2. ຄູສອນ. | 01 | 01 |
| 3. ນັກສຶກສາ. | 08 | 08 |
| ລວມ | 10 | 10 |

**ເຄື່ອງມືການວິໄຈ ແລະ ການວິເຄາະຂໍ້ມູນ**

ເຄື່ອງມືການວິໄຈ ແລະ ການວິເຄາະຂໍ້ມູນປະກອບມີດັ່ງນີ້:

ເຄື່ອງມືວິໄຈ ເຄື່ອງມືທີ່ໃຊ້ໃນການເກັບກຳຂໍ້ມູນແມ່ນແບບສອບຖາມ (Questoinnaire) ທີ່ສ້າງຂຶ້ນໃຫ້ສອດຄ່ອງກັບຈຸດປະສົງ ແລະ ບັນຫາທີ່ສຶກສາ. ລັກສະນະຂອງແບບສອບຖາມເປັນແບບມາດຕາສ່ວນປະມານຄ່າ 5 ລະດັບ (5 Level Rating Scale), ເຊິ່ງກວມເອົາເນື້ອໃນ 2 ດ້ານຄື:

- ດ້ານການນຳໃຊ້ສື່ເຂົ້າໃນການຮຽນ-ການສອນ
- ດ້ານຜົນການນຳໃຊ້ສື່ເຂົ້າໃນການຮຽນ-ການສອນ ຄຳຖາມທັງໝົດມີຈຳນວນ 25 ຂໍ້.

ການວິເຄາະຂໍ້ມູນ ການວິເຄາະຂໍ້ມູນແມ່ນນຳໃຊ້ສະຖິຕິພື້ນຖານ (Descriptive Statistics) ເພື່ອວິເຄາະຂໍ້ມູນທີ່ໄດ້ຈາກແບບສອບຖາມ ດັ່ງນີ້:

- ວິເຄາະຂໍ້ມູນສ່ວນຕົວຂອງຜູ້ຕອບແບບສອບຖາມ ໂດຍໃຊ້ຄ່າສ່ວນຮ້ອຍ (Percentage)
- ວິເຄາະຂໍ້ມູນສະພາບການຮຽນ-ການສອນ ແລະ ລະດັບຄວາມຄິດເຫັນ ໂດຍການຊອກຫາຄ່າສະເລ່ຍ (Mean ຫຼື $\bar{X}$ )

**ການສ້າງເຄື່ອງມືເກັບກຳຂໍ້ມູນ**

ຜູ້ວິໄຈໄດ້ດຳເນີນຕາມລຳດັບຂັ້ນຕອນສ້າງເຄື່ອງມືເກັບກຳຂໍ້ມູນດັ່ງນີ້:

1. ໄດ້ສຶກສາເອກະສານທີ່ກ່ຽວຂ້ອງກັບຫົວຂໍ້ວິໄຈ ແລະ ອີງໃສ່ປະສົບການສອນຕົວຈິງ ເພື່ອນຳມາສ້າງແບບສອບຖາມໃຫ້ສອດຄ່ອງກັບຫົວຂໍ້ ແລະ ບັນຫາທີ່ສຶກສາ.
2. ດຳເນີນຂຽນແບບສອບຖາມໃຫ້ສອດຄ່ອງກັບ 2 ດ້ານຄື: ດ້ານການນຳໃຊ້ສື່ເຂົ້າໃນການຮຽນ - ການສອນຂອງຄູ ແລະ ນັກສຶກສາວິທະຍາໄລຄູສົງ ດ້ານການປະເມີນຜົນໃນການຮຽນ - ການສອນຂອງຄູ ແລະ ນັກສຶກສາວິທະຍາໄລຄູສົງ.
3. ຂໍໜັງສືສະເໜີນຳຄະນະອຳນວຍການວິທະຍາໄລຄູສົງຈຳປາສັກ ເຖິງຜູ້ອຳນວຍການວິທະຍາໄລຄູສົງຈຳປາສັກເພື່ອຕິດຕໍ່ພົວພັນ ແລະ ຂໍອະນຸຍາດເກັບກຳຂໍ້ມູນ ຄູອາຈານ ແລະ ນັກສຶກສາພາຍໃນວິທະຍາໄລຄູສົງ.
4. ນຳເອົາໃບອະນຸຍາດຈາກຜູ້ອຳນວຍການໄປສົ່ງຕໍ່ຄູອາຈານ ແລະ ນັກສຶກສາທີ່ກ່ຽວຂ້ອງແລ້ວນຳເອົາແບບສອບຖາມຢາຍໃຫ້ຄູ -ອາຈານ ແລະ ນັກສຶກສາຢູ່ໃນວິທະຍາໄລຄູສົງ,ສະຫຼຸບ ແລະ ນຳສະເໜີໃນຮູບແບບການລຽງຄຳຕາມລຳດັບ.

## ຜົນການວິໄຈ ແລະ ອະພິປາຍຜົນ

### ຜົນການວິໄຈ

1. ການນຳໃຊ້ສື່ເຂົ້າໃນການຮຽນ-ການສອນ ຄວາມຄິດເຫັນໂດຍລວມ ແມ່ນຢູ່ໃນລະດັບປານກາງ ($\bar{X}$ = 3.12), ເມື່ອພິຈາລະນາແຕ່ລະຂໍ້ເຫັນວ່າ ຂໍ້ທີ່ມີຄວາມຄິດເຫັນມີຄ່າສະເລ່ຍສູງສຸດມີ 2 ຂໍ້ ໄດ້ແກ່: ສື່ການສອນທີ່ຄູນຳມາໃຊ້ກະຕຸ້ນໃຫ້ນັກສຶກສາເກີດການຮຽນຮູ້ດ້ວຍຕົນເອງ ແລະ ນຳໃຊ້ສື່ການສອນເໝາະສົມກັບລະດັບຄວາມຮູ້

ຂອງນັກສຶກສາ ແມ່ນຢູ່ໃນລະດັບຫຼາຍ ($\bar{X}$= 3.60), ຮອງລົງມາແມ່ນ ມີ 2 ຂໍ້ ໄດ້ແກ່: ສື່ການສອນທີ່ໃຊ້ແມ່ນໃຫ້ສອດຄ່ອງກັບເນື້ອໃນບົດຮຽນ ແລະ ຄູໄດ້ໝູນໃຊ້ສິ່ງທີ່ມີໃນທ້ອງຖິ່ນເປັນສື່ໃນການຮຽນ - ການສອນ (ພາບທຳມະຊາດ, ພາບສຳນັກງານ,ຕົ້ນໄມ້, ສັດ) ແມ່ນຢູ່ໃນລະດັບປານກາງ ($\bar{X}$= 3.40). ຄູນຳໃຊ້ສື່ການສອນທີ່ຫຼາກຫຼາຍແມ່ນຢູ່ໃນລະດັບປານກາງ ($\bar{X}$= 2.60).

2. ການວັດປະເມີນຜົນການນຳໃຊ້ສື່ເຂົ້າໃນການຮຽນ-ການສອນ ຄວາມຄິດເຫັນໂດຍລວມ ແມ່ນຢູ່ໃນລະດັບປານກາງ ($\bar{X}$= 3.21), ເມື່ອພິຈາລະນາແຕ່ລະຂໍ້ເຫັນວ່າ ຂໍ້ທີ່ມີຄວາມຄິດເຫັນມີຄ່າສະເລ່ຍສູງສຸດໄດ້ແກ່: ພາຍຫຼັງການປະເມີນຄູໄດ້ສົ່ງເສີມນັກສຶກສາເກັ່ງ ແລະ ຊອກຫາວິທີຊ່ວຍເຫຼືອນັກສຶກສາອ່ອນແມ່ນຢູ່ໃນລະດັບຫຼາຍ ($\bar{X}$= 3.70), ຮອງລົງມາແມ່ນມີ 3 ຂໍ້ ໄດ້ແກ່: ການປະເມີນຜົນໃຫ້ສອດຄ່ອງ ແລະ ເໝາະສົມກັບເນື້ອໃນບົດຮຽນ; ມີການປະເມີນຜົນທາງດ້ານການຮຽນປະຈຳເດືອນ ແລະຄູໄດ້ມີການແຈ້ງຜົນການປະເມີນທຸກຄັ້ງ ແມ່ນຢູ່ໃນລະດັບຫຼາຍ ($\bar{X}$= 3.50). ສ່ວນຂໍ້ທີ່ມີຄວາມຄິດເຫັນມີຄ່າສະເລ່ຍຕ່ຳທີ່ສຸດໄດ້ແກ່: ພາຍຫຼັງການນຳໃຊ້ສື່ເຫັນວ່ານັກສຶກສາມີຄວາມສົນໃຈບົດຮຽນຫຼາຍຂຶ້ນ ແມ່ນຢູ່ໃນລະດັບປານກາງ ($\bar{X}$= 2.80).

ຄວາມຄິດເຫັນຂອງຜູ້ບໍລິຫານ, ຄູ ໃນການສຶກການນຳໃຊ້ສື່ເຂົ້າໃນການຮຽນ-ການສອນວິຊາວິທະຍາສາດການເມືອງ ສາຍຄູພາສາລາວ-ວັນນະຄະດີ ປີທີ 3 ວິທະຍາໄລຄູສົງຈຳປາສັກ ສົກສຶກສາ 2024-2025. ຄວາມຄິດເຫັນໂດຍລວມທັງ 2 ດ້ານ ແມ່ນຢູ່ໃນລະດັບປານກາງ ($\bar{X}$= 3.11), ເມື່ອພິຈາລະນາໃນແຕ່ລະດ້ານແລ້ວເຫັນວ່າດ້ານທີ່ມີຄ່າສະເລ່ຍຄວາມຄິດເຫັນມີຄ່າສູງສຸດໄດ້ແກ່ ດ້ານຜົນການນຳໃຊ້ສື່ເຂົ້າໃນການຮຽນ-ການສອນ ແມ່ນຢູ່ໃນລະດັບປານກາງ ($\bar{X}$= 3.17), ຮອງລົງມາແມ່ນ ດ້ານການນຳໃຊ້ສື່ເຂົ້າໃນການຮຽນ-ການສອນການຮຽນ-ການສອນແມ່ນຢູ່ໃນລະດັບປານກາງ ($\bar{X}$= 3.12).

**ອະພິປາຍຜົນ**

1. ດ້ານການນນຳໃຊ້ສື່ເຂົ້າໃນການຮຽນ-ການສອນ ເມື່ອພິຈາລະນາລະອຽດແລ້ວ ພົບວ່າ: ຄວາມຄິດເຫັນໂດຍລວມ ແມ່ນຢູ່ໃນລະດັບປານກາງ. ຂໍ້ທີ່ມີຄວາມຄິດເຫັນມີຄ່າສະເລ່ຍສູງສຸດມີ 2 ຂໍ້ ໄດ້ແກ່: ສື່ການສອນທີ່ນຳມາໃຊ້ກະຕຸ້ນໃຫ້ນັກສຶກສາເກີດການຮຽນຮູ້ດ້ວຍຕົນເອງ ແລະນຳໃຊ້ສື່ການສອນເໝາະສົມກັບລະດັບຄວາມຮູ້ຂອງນັກສຶກສາ ແມ່ນຢູ່ໃນລະດັບຫຼາຍ. ສ່ວນຂໍ້ທີ່ມີຄວາມຄິດເຫັນມີຄ່າສະເລ່ຍຕ່ຳທີ່ສຸດໄດ້ແກ່: ສ່ວນຂໍ້ທີ່ມີຄວາມຄິດເຫັນມີຄ່າສະເລ່ຍຕ່ຳທີ່ສຸດໄດ້ແກ່: ຄູນຳໃຊ້ສື່ການສອນທີ່ຫຼາກຫຼາຍ ແມ່ນຢູ່ໃນລະດັບປານກາງ. ເຊິ່ງສອດຄ່ອງກັບທາງຽນ (Nguyễn, 2013), ຫຼັກການໃຊ້ສື່ເຂົ້າໃນກາຮຽນ-ການສອນ ໄດ້ມີຫຼາຍໆທ່ານນັກຄົ້ນຄວ້າໄດ້ໃຫ້ຄວາມໝາຍທີ່ແຕກຕ່າງກັນດັ່ງນີ້: ບັນດາສື່ການສອນຖືກນຳໃຊ້ຖືກຕ້ອງ, ມີຄຸນປະໂຫຍດຕໍ່ການເພີ່ມປະສິດທິພາບການຖ່າຍທອດຄວາມຮູ້ທາງດ້ານເນື້ອໃນ ແລະ ວິທີສິດສອນຂຶ້ນຫຼາຍ. ດີດັ່ງໄດ້ອະທິບາຍຂ້າງເທິງນັ້ນ, ສື່ການສອນບໍ່ພຽງແຕ່ມີໜ້າທີ່ເປັນພາບປະກອບໃຫ້ແກ່ບົດສອນແຕ່ຫາກຍັງຊຸກຍູ້ຂະບວນການຮັບເອົາຄວາມຮູ້ ແລະ ເຂົ້າໃຈເນື້ອໃນສິ່ງທີ່ຕ້ອງການຖ່າຍທອດ. ຖ້າຫາກບໍ່ຮູ້ນຳໃຊ້ສື່ການສອນດ້ວຍວິທີທີ່ເປັນວິທະຍາສາດ, ເໝາະສົມຕາມວິທີຮັບຮູ້ເປັນລະບົບ, ຊ້ຳບໍ່ໜຳຍັງສວຍໃຊ້ເຄື່ອງມືຫຼາຍຢ່າງໃນເວລາສອນແມ່ນຜົນສຳເລັດຂອງມັນບໍ່ພຽງແຕ່ບໍ່ເພີ່ມຂຶ້ນແຕ່ຫາກຍັງເຮັດໃຫ້ນັກສຶກສາເຂົ້າໃຈບົດຮຽນຍາກ, ສັບສົນ ແລະ ເຄັ່ງຄຽດ. ຍ້ອນແນວນັ້ນ, ບັນດາທ່ານນັກສ້າງຄູໄດ້ສັງລວມຫຼັກການນຳໃຊ້ສື່ການສອນ (ເອີ້ນວ່າຫຼັກການ 3 ຖືກ) ດັ່ງລຸ່ມນີ້: ຖືກເວລາ, ຖືກສະຖານທີ່ ແລະ ເໝາະສົມກັບລະດັບ.

2. ດ້ານຜົນການນຳໃຊ້ສື່ເຂົ້າໃນການຮຽນ-ການສອນ. ຄວາມຄິດເຫັນໂດຍລວມ ແມ່ນຢູ່ໃນລະດັບປານກາງ, ເມື່ອພິຈາລະນາແຕ່ລະຂໍ້ເຫັນວ່າ ຂໍ້ທີ່ມີຄວາມຄິດເຫັນມີຄ່າສະເລ່ຍສູງສຸດໄດ້ແກ່: ພາຍຫຼັງການປະເມີນຄູໄດ້ສົ່ງເສີມນັກສຶກສາເກັ່ງ ແລະ ຊອກຫາວິທີຊ່ວຍເຫຼືອນັກສຶກສາອ່ອນແມ່ນຢູ່ໃນລະດັບຫຼາຍ ($\bar{X}$ = 3.70). ສ່ວນຂໍ້ທີ່ມີຄວາມຄິດເຫັນມີຄ່າສະເລ່ຍຕ່ຳທີ່ສຸດໄດ້ແກ່ ພາຍຫຼັງການນຳໃຊ້ສື່ເຫັນວ່ານັກສຶກສາມີຄວາມສົນໃຈບົດຮຽນຫຼາຍ

ຂຶ້ນ ແມ່ນຢູ່ໃນລະດັບປານກາງ. ເຊິ່ງສອດຄ່ອງກັບລ່ຽວ (Liễu, 2013), ສື່ການສອນສາມາດຮັກສາບົດບາດຫຼວງຫຼາຍໃນຂະບວນການສິດສອນ, ສື່ການສອນເຮັດໃຫ້ເນື້ອໃນທີ່ຮຽນມີຊີວິດຊີວາ, ຍົກສູງແຮງຈູງໃຈໃນການຮຽນ ແລະ ຍົກສູງຄວາມເຊື່ອຖືຂອງຜູ້ຮຽນເຂົ້າໃນວິທະຍາສາດ, ສື່ການສອນຍັງຊ່ວຍໃຫ້ຜູ້ຮຽນພັດທະນາຄວາມສາມາດໃນການຮັບຮູ້, ພິເສດແມ່ນຄວາມສາມາດໃນການສັງເກດ, ຈິນຕະນາການ ( ວິເຄາະ, ສັງລວມບັນດາປະກົດການ, ຖອດບົດຮຽນສະຫຼຸບສັງລວມທີ່ມີຄວາມເຊື່ອຖືສູງ...), ຄູປະຢັດເວລາແຕ່ລະຊົ່ວໂມງໃນເວລາຂຶ້ນຫ້ອງສອນ, ຄູຄວບຄຸມຂະບວນການຮັບຮູ້ຂອງຜູ້ຮຽນ, ກວດກາ ແລະ ປະເມີນຜົນການຮ່ຳຮຽນຂອງຜູ້ຮຽນໄດ້ສະດວກສະບາຍ ແລະ ມີປະສິດທິຜົນສູງ. ເວົ້າລວມແລ້ວ, ສື່ການສອນປະກອບສ່ວນຍົກສູງປະສິດທິພາບ ຂອງວິຊາຊີບຄູຂອງຄູ ແລະ ນັກສຶກສາ.

ຄວາມຄິດເຫັນຂອງຄະນະອຳນວຍການ, ຄູ ແລະ ນັກສຶກສາ ໃນການສຶກການນຳໃຊ້ສື່ເຂົ້າໃນການຮຽນ-ການສອນວິຊາວິທະຍາສາດການເມືອງ ສາຍຄູພາສາລາວ-ວັນນະຄະດີ ປີທີ 3 ວິທະຍາໄລຄູສິງຈຳປາສັກ ສົກສຶກສາ 2024-2025. ຄວາມຄິດເຫັນໂດຍລວມທັງ 2 ດ້ານ ແມ່ນຢູ່ໃນລະດັບປານກາງ. ຜ່ານການສັງເກດຂອງຄະນະອຳນວຍການ, ຄູສອນປະຈຳວິຊາເຫັນວ່າ: ສື່ການສອນທີ່ນຳມາໃຊ້ກະຕຸ້ນໃຫ້ນັກສຶກສາເກີດການຮຽນຮູ້ດ້ວຍຕົນເອງ, ນຳໃຊ້ສື່ການສອນເໝາະສົມກັບລະດັບຄວາມຮູ້ຂອງນັກສຶກສາ, ມີຄວາໜ້າສົນໃຈ, ມີຄວາມທັນສະໄໝ... ແຕ່ເຫັນວ່າການຈັດຫາ ແລະ ນຳໃຊ້ສື່ການຮຽນ-ການສອນທີ່ທັນສະໄໝມີຈຳນວນຈຳກັດ, ການສ້າງສື່ການຮຽນ-ການສອນທີ່ມີສີສັນງົດງາມ, ແປກໃໝ່, ໜ້າສົນໃຈມີໜ້ອຍ, ການນຳໃຊ້ສື່ຂອງຄູໃນບາງດ້ານຍັງບໍ່ທັນຊຳນິຊຳນານ ສິ່ງຜົນເຮັດໃຫ້ປະສິດທິຜົນຂອງການນຳໃຊ້ແມ່ນຍັງບໍ່ທັນສູງ; ເຖິງແມ່ນວ່າຄູຄູໄດ້ສິ່ງເສີມນັກສຶກສາເກັ່ງ ແລະ ຊອກຫາວິທີຊ່ວຍເຫຼືອນັກສຶກສາອ່ອນ, ມີການປະເມີນຜົນທີ່ສອດຄ່ອງ ແລະ ເໝາະສົມກັບເນື້ອໃນບົດຮຽນ, ມີການປະເມີນຜົນທາງດ້ານການຮຽນປະຈຳເດືອນ ແລະ ຄູໄດ້ມີການແຈ້ງຜົນການປະເມີນທຸກຄັ້ງກໍຕາມ ແຕ່ສາເຫດຫຼັກແມ່ນຍ້ອນບັນດາປັດໄຈທີ່ສົ່ງຜົນສະທ້ອນດັ່ງທີ່ໄດ້ກ່າວມາຂ້າງເທິງນັ້ນຈຶ່ງເຮັດໃຫ້ຜົນຂອງການນຳໃຊ້ສື່ຢູ່ໃນລະດັບປານກາງ.

ຕໍ່ກັບບັນຫາທີ່ກ່າວມານັ້ນຄະນະອຳນວຍການ, ຄູສອນ ໄດ້ແນະນຳແນວທາງໃນການນຳໃຊ້ສື່ເຂົ້າໃນການຮຽນ-ການສອນແມ່ນ ຕ້ອງໄດ້ມີການຈັດຫາ ແລະ ນຳໃຊ້ສື່ການຮຽນ-ການສອນທີ່ທັນສະໄໝ, ສ້າງສື່ການຮຽນ-ການສອນທີ່ມີສີສັນງົດງາມ, ແປກໃໝ່, ໜ້າສົນໃຈ, ການນຳໃຊ້ສື່ຂອງຄູໃຫ້ມີຄວາມຄ່ອງແຄ້ວຊຳນິຊຳນານ, ລາຍວິຊາຄວນຕິດຕັ້ງໂປຣເຈັກເຕີໄວ້ກັບທີ່ເພື່ອສະດວກໃນການນຳໃຊ້, ຕຳລາຮຽນຄວນມີຮູບພາບປະກອບໃຫ້ຫຼາຍຂຶ້ນ, ມີການແຂ່ງຂັນປະກວດການສ້າງ ແລະ ນຳໃຊ້ສື່ໃນລາຍວິຊາ, ນຳໃຊ້ສື່ວັດຖຸຈິງໃຫ້ຫຼາຍຂຶ້ນ. ດ້ານຄູຜູ່ສອນ ແລະ ວິທີສິດສອນແມ່ນ ຄູຄວນເຮັດກິດຈະກຳຫຼາກຫຼາຍ ແລະ ສ້າງສັນຍິ່ງຂຶ້ນ, ມີການຫຼິ້ນເກມຕອບບັນຫາ, ສ້າງແຮງຈູງໃຈກະຕຸ້ນ ແລະ ໃຫ້ຄວາມຊ່ວຍເຫຼືອແກ່ນັກສຶກສາ, ເອົາໃຈໃສ່ຕິດຕາມນັກສຶກສາທີ່ຮຽນອ່ອນ, ອະທິບາຍ ຍົກຕົວຢ່າງ ປຽບທຽບໃຫ້ຫຼາຍຂຶ້ນເພື່ອໃຫ້ນັກສຶກສາເຂົ້າໃຈງ່າຍ, ເອົາໃຈໃສ່ໃຫ້ຄຳຕັກເຕືອນແນະນຳນັກສຶກສາໃຫ້ມີຄວາມຕື່ນຕົວໃນການຮຽນ, ສ້າງໂອກາດໃຫ້ນັກສຶກສາກ້າຄິດ ແລະ ກ້າສະແດງຄຳຄິດເຫັນໃຫ້ຫຼາຍຂຶ້ນ.

## ສະຫຼຸບຜົນການວິໄຈ

ຜົນການວິໄຈພົບວ່າ ການສຶກການນຳໃຊ້ສື່ເຂົ້າໃນການຮຽນ-ການສອນວິຊາວິທະຍາສາດການເມືອງ ສາຍຄູພາສາລາວ-ວັນນະຄະດີ ປີທີ 3 ວິທະຍາໄລຄູສິງຈຳປາສັກ ສົກສຶກສາ 2024-2025. ຄວາມຄິດເຫັນໂດຍລວມທັງ 2 ດ້ານ ແມ່ນຢູ່ໃນລະດັບປານກາງ. ສື່ການສອນທີ່ຄູນຳມາໃຊ້ກະຕຸ້ນໃຫ້ນັກສຶກສາເກີດການຮຽນຮູ້ດ້ວຍຕົນເອງ ແລະນຳໃຊ້ສື່ການສອນເໝາະສົມກັບລະດັບຄວາມຮູ້ຂອງນັກສຶກສາ; ພາຍຫຼັງການປະເມີນຄູໄດ້ສົ່ງເສີມນັກສຶກສາເກັ່ງ ແລະ ຊອກຫາວິທີຊ່ວຍເຫຼືອນັກສຶກສາອ່ອນ. ດັ່ງນັ້ນ, ຄູຄວນນຳໃຊ້ສື່ໃຫ້ມີຄວາມຫຼາກຫຼາຍເພື່ອສາມາດດຶງດູດຄວາມສົນໃຈຂອງນັກສຶກສາ ແລະ ເຮັດໃຫ້ນັກສຶກສາມີຄວາມເຂົ້າໃຈບົດຮຽນຫຼາຍຂຶ້ນ.

## ຂໍ້ສະເໜີແນະ

ຈາກການວິໄຈກ່ຽວກັບສະພາບສຶກສາການສຶກການນຳໃຊ້ສື່ເຂົ້າໃນການຮຽນ-ການສອນວິຊາວິທະຍາສາດການເມືອງ ສາຍຄູພາສາລາວ-ວັນນະຄະດີ ປີທີ 3 ວິທະຍາໄລຄູສົງຈຳປາສັກ ສົກສຶກສາ 2024-2025. ຜູ້ວິໄຈມີຂໍ້ສະເໜີ ແລະ ຂໍ້ສະເໜີແນະ ເພື່ອເປັນປະໂຫຍດໃນການດຳເນີນການວິໄຈໃນຄັ້ງຕໍ່ໄປ ດັ່ງນີ້:

1. ຄູຄວນຈັດຫາສື່ທີ່ນຳໃຊ້ສະດວກ, ສື່ທີ່ມີໃນທ້ອງຖິ່ນ, ທັນສະໄໝ, ງົດງາມ, ຄຸນນະພາບດີ, ນຳໃຊ້ສື່ໃຫ້ມີຄວາມຄ່ອງແຄ້ວຊຳນິຊຳນານ, ຈັດໃຫ້ມີການສຶກສາຄົ້ນຄວ້າໃນຫ້ອງສະໝຸດ ແລະ ແຫຼ່ງຮຽນຮູ້ອື່ນໆ.

2. ນຳໃຊ້ສື່ອອນໄລນ໌ ຊ່ວຍສອນໃຫ້ຫຼາຍຂຶ້ນ; ຄູຄວນການສ້າງຄວາມສຳພັນໃຫ້ຄວາມໃກ້ຊິດ, ສ້າງແຮງຈູງໃຈ, ຍົກຍ້ອງ, ຊ່ວຍເຫຼືອ ແລະ ແນະນຳໃຫ້ເປັນແກ່ນັກສຶກສາເປັນຢ່າງດີ.

3. ຄູຄວນເຮັດກິດຈະກຳຫຼາກຫຼາຍ ແລະ ສ້າງສັນ, ການອະທິບາຍບົດຮຽນບໍ່ໄວເກີນໄປ, ເອົາໃຈໃສ່ຕິດຕາມນັກສຶກສາທີ່ຮຽນອ່ອນ, ອະທິບາຍ ຍົກຕົວຢ່າງ ປຽບທຽບໃຫ້ຫຼາຍຂຶ້ນ, ເອົາໃຈໃສ່ໃຫ້ຄຳຕັກເຕືອນແນະນຳນັກສຶກສາໃຫ້ມີຄວາມຕື່ນຕົວໃນການຮຽນ.

**ຂໍ້ສະເໜີແນະສຳລັບການວິໄຈຄັ້ງຕໍ່ໄປ.**

1. ຄວນສຶກສາການພັດທະນາສື່ການຮຽນ-ການສອນຂອງຄູໃນສາຍພາສາພາສາລາວ-ວັນນະຄະດີ ວິທະຍາໄລຄູສົງຈຳປາສັກ.

2. ຄວນສຶກສາການສ້າງແຮງຈູງໃຈໃນການຮຽນໃຫ້ແກ່ນັກສຶກສາ ໃນສາຍພາສາພາສາລາວ-ວັນນະຄະດີ ວິທະຍາໄລຄູສົງຈຳປາສັກ.

## ໃບກຽດຕິຄຸນ

ການວິໄຈໃນຄັ້ງນີ້ສຳເລັດໄປດ້ວຍດີ ເຊິ່ງເກີດມາຈາກຄວາມຊ່ວຍເຫຼືອຂອງຫຼາຍໆພາກສ່ວນ. ຜູ້ວິໄຈຂໍສະແດງຄວາມຮູ້ບຸນຄຸນມາຍັງຄະນະອຳນວຍການ, ຄູ-ອາຈານ ແລະ ເພື່ອນຮ່ວມງານທຸກທ່ານພາຍໃນວິທະຍາໄລຄູສົງຈຳປາສັກ ທີ່ໃຫ້ໂອກາດຂ້າພະເຈົ້າໄດ້ສຶກສາ ພ້ອມທັງອະນຸຍາດໃຫ້ລົງເກັບກຳຂໍ້ມູນໃນສະຖານທີ່ຈົນໄດ້ເຮັດໃຫ້ການຂຽນບົດວິໄຈຂອງຂ້າພະເຈົ້າສຳເລັດດ້ວຍດີ. ຂ້າພະເຈົ້າຂໍໃຫ້ຄວາມສັນຍາວ່າ ຈະນຳເອົາຄວາມຮູ້, ຄວາມສາມາດ ແລະ ບົດຮຽນປະສົບການໃນການວິໄຈຄັ້ງນີ້ນຳໄປໃຊ້ໃນທາງທີ່ເກີດປະໂຫຍດເຂົ້າໃນການພັດທະນາປະເທດຊາດ, ພຸດທະສາສະໜາ, ກົມກອງ ແລະ ພັດທະນາຕົນເອງໃຫ້ມີຄວາມກ້າວໜ້າຍິ່ງຂຶ້ນ. ຂໍສະແດງຄວາມຮູ້ບຸນຄຸນມາຍັງທ່ານອາຈານ-ຄູທີ່ປຶກສາ ທ່ານ ຊອ. ປທ. ຄຳໃບແກ້ວສະຫວ່າງ ທີ່ໄດ້ໃຫ້ຄຳປຶກສາແນະນຳ, ຊ່ວຍເຫຼືອຂ້າພະເຈົ້າຕະຫຼອດມາ ເຮັດໃຫ້ຂ້າພະເຈົ້າເຫັນໄດ້ແນວທາງໃນການຂຽນບົດວິໄຈໃນຄັ້ງນີ້ຈົນປະສົບຜົນສຳເລັດ.

## ເອກະສານອ້າງອີງ

ກົງການບູລະນະວັນນະກູນ. (2019). ການພັດທະນາສື່ການຮຽນຮູ້ບອດເກມເພື່ອສົ່ງເສີມຄວາມສາມາດການຮຽນຮູ້ວິຊາພັດທະນາແບບຮຽນພາສາໄທ ແລະ ຄວາມຮູ້ໃນການຮຽນຮູ້ສຳລັບນັກສຶກສາປະລິນຍາຕີ. 11-12.

ຈາລຸວັນ ເທວະກູນ. (2012). *ຄວາມເພິ່ງພໍໃຈໃນການຈັດການຮຽນ-ການສອນຂອງນັກຮຽນລະດັບປະກາສະນີຍະບັດວິຊາຊີບປະເພດວິຊາພານິດສະຍາກຳຊັ້ນປີທີ 1 -3.*

ສຸວັນດີ ສາຍສະກົນ. (2020). ການພັດທະນາສື່ບົດຮຽນອອນລາຍວິຊາຫຼັກເສດຖະກາສາດ, ສະຖາບັນອາຊີວະສຶກສາພາກກາງ 5 ສຳນັກງານຄະນະກຳມະການອາຊີວະສຶກສາ ກະຊວງສຶກສາທິການ. 4.

ສົມເພັດ ແກ້ວໃຈດີ. (2021). *ຄວາມເພິ່ງພໍໃຈຂອງນັກສຶກສາຕໍ່ການນຳໃຊ້ສື່ເຂົ້າໃນການຮຽນ-ການສອນວິຊາທິດສະດີພາສາ .*

ໄຊຍົດ ເຮືອງສຸວັນ. (1980). *ເອກະສານການສອນຊຸດວິຊາເຕັກໂນໂລຊີ ແລະ ສື່ການສຶກສາ.* ກຸງເທບມະຫານະຄອນ

ທານິນ ສິນຈາຣຸ. (2008). *ການວິໃຈ ແລະ ວິເຄາະຂໍ້ມູນທາງສະຖິຕິດ້ວຍ spss.* ສໍານັກພິມບິສຊິເນສອາແອນດີ.

ພິມລະດາ ຄຣອງຍຸດ ເກວະລີ ຜັງດີ. (2013). *ຄວາມເພິ່ງພໍໃຈທີ່ມີຕໍ່ການຈັດການຮຽນ-ການສອນໃນຫຼັກສູດຂອງພາກວິຊາສະຖິຕິ ຄະນະວິທະຍາສາດ ມະຫາວິທະຍາໄລຂອນແກ່ນ.*

ມາຫາມະ ສະມະອຸງ. (2011). *ບັນຫາ ແລະ ຄວາມຕ້ອງການໃຊ້ສື່ການຮຽນ-ການສອນຂອງຄູໂຮງຮຽນສັງກັດເທດສະບານເມືອງປັດຕານີ.* 16-17.

ວິໄຊ ອິນສຸວັນ. (2022). *ສຶກສາການນໍາໃຊ້ສື່ເຂົ້າໃນການຮຽນ-ການສອນພາສາອັງກິດຊັ້ນ ມ.3 ທີ່ໂຮງຮຽນມັດທະຍົມຕອນຕົ້ນສິງປະທຸມພອນ ເມືອງປະທຸມພອນແຂວງຈໍາປາສັກ.*

ວິ ພັນແພງດີ. (2017). *ການນໍາໃຊ້ສື່ເຂົ້າໃນການສອນວິຊາທັມມະ ທີ່ໂຮງຮຽນມັດທະຍົມຕອນສິງສຸຂຸມາ ເມືອງສຸຂຸມາ ແຂວງຈໍາປາສັກ.*

ອິດຕິຂັນ ສຸຫຼົງ, ສຸໄຣຍາ ຢູໂຊະ, ນິປັດທະມາ ກາລະມິແນ ແລະ ວໍລະເວດພິສິດ ຍົດສີລີ ຟັດລີນາ ຢູໂຊະ. (2016). *ການສຶກສາລັກສະນະການໃຊ້ສື່ກັບຂະບວນການການຮຽນ-ການສອນໃນລາຍວິຊາພາສາອັງກິດຂອງໂຮງຮຽນມັດທະຍົມສຶກສາໃນແຂວງຍະລາ.*

Lê Thị Minh Thanh. (2014). Nghiên cứu giải pháp nâng cao hiệu quả dạy học bằng phương tiện dạy học hiện đại ở học viện công nghệ bưu chính viễn thông. *Tạp chí khoa học Đại học quốc gia Hà Nội*(30), 41-47.

Liễu Nguyễn Thị (2013). cách thức nâng cao hiểu quả sử dụng phương tiện dạy học, Đại học sư phạm Hưng Yên. 15.

MinhTrung Nguyễn. (2013). *phương tiện dạy học.* Nhà xuất bản sư phạm kỹ thuật.